# ສິ່ງທີ່ຄາດຫວັງ:
# ຂໍ້ຄວາມການເຂົ້າກວດໃນຄຣີນິກສັກຢາວັກຊີນເຄື່ອນທີ່

ຄຣີນິກການສັກຢາວັກຊີນເຄື່ອນທີ່ ໄດ້ຈັດຫາການສັກຢາວັກຊີນໂຄວິດ-19 ໃຫ້ທ່ານ ແລະ ຊຸມຊົນຂອງທ່ານ. ວີດີໂອນີ້ນໍາພາທ່ານເຂົ້າຊົມສິ່ງທີ່ທ່ານຄາດຫວັງເມື່ອທ່ານເຂົ້າມາທີ່ຄຣີນິກສັກຢາວັກຊີນເຄື່ອນທີ່.

ເມື່ອທ່ານມາເຖິງຄຣີນິກເຄື່ອນທີ່ ທ່ານຈະໄດ້ຮັບການລົງທະບຽນນັດໝາຍສັກຢາວັກຊີນຈາກພະນັກງານຕ້ອນຮັບ.

*[ພະນັກງານຕ້ອນຮັບ] ສະບາຍດີ! ດີລະ, ຂ້າພະເຈົ້າຈະໃຫ້ທ່ານລົງທະບຽນມື້ນີ້. ນາມສະກຸນຂອງທ່ານແມ່ນຫຍັງ?*

ກະລຸນາແຈ້ງໃຫ້ພວກເຂົາຮູ້ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອ ຫຼື ອໍານວຍຄວາມສະດວກດ້ານພາສາ. ຄຣີນິກສັກຢາວັກຊີນເຄື່ອນທີ່ເປີດໃຫ້ຍ່າງເຂົ້າໄປໄດ້ເລີຍ, ດັ່ງນັ້ນເອົາເພື່ອນຂອງທ່ານມານໍາ!

*[ພະນັກງານຕ້ອນຮັບ] ດີແລ້ວທີ່ທ່ານມາ, ທ່ານສາມາດເຂົ້າຄິວລໍຖ້າໄດ້ເລີຍ.*

ລໍຖ້າຄິວຂອງທ່ານຢູ່ຂ້າງນອກລົດບັສ ຫຼື ລໍຖ້າທີ່ສະຖານທີ່ລໍຖ້າໃນລົດບັສ.

ເມື່ອຮອດຄິວຂອງທ່ານເພື່ອຮັບການສັກຢາວັກຊີນ, ນັ່ງລົງບ່ອນໃກ້ກັບທ່ານໝໍທີ່ພວກເຮົາຈັດໄວ້ໃຫ້. ມີສາກກັ້ງໃຫ້ຖ້າທ່ານຕ້ອງການຄວາມເປັນສ່ວນຕົວ.

*[ທ່ານໝໍ] ບອກໄດ້ບໍ່ວ່າທ່ານຊື່ຫຍັງ?*

ທ່ານໝໍຈະໃຫ້ຂໍ້ມູນທີ່ທ່ານຕ້ອງການຮູ້ກັບທ່ານ ແລະ ທ່ານສາມາດຖາມຄໍາຖາມທີ່ທ່ານຕ້ອງການຮູ້ກ່ຽວກັບວັກຊີນໂຄວິດ-19.

ທ່ານໝໍຈະເຂົ້າໃກ້ກົກແຂນຂອງທ່ານເພື່ອທໍາການສັກຢາວັກຊີນ.

ເມື່ອທ່ານໄດ້ຮັບການສັກຢາວັກຊີນຮຽບຮ້ອຍແລ້ວ, ທ່ານຕ້ອງອອກຈາກລົດບັສ.

*[ພະນັກງານ] ສະບາຍດີ. ຂໍຂອບໃຈຫຼາຍໆທີ່ມາ. ຂໍຂອບໃຈສໍາລັບການເຂົ້າມາຮັບການສັກຢາວັກຊີນ. ແລະ ພວກເຮົາຕ້ອງການໃຫ້ທ່ານລໍຖ້າຢູ່ທີ່ນີ້ເປັນເວລາ 15 ນາທີ.*

ທ່ານຕ້ອງນັ່ງເພື່ອຕິດຕາມເປັນເວລາ 15 ນາທີ. ແລະ ພະນັກງານຈະອະທິບາຍສິ່ງທີ່ຈະເຮັດຖ້າທ່ານຮູ້ສຶກບໍ່ຄ່ອຍດີ. ພະນັກງານທີ່ໄດ້ຮັບການຝຶກອົບຮົມ ເຊັ່ນ ພະຍາບານ ຫຼື ວິຊາການແພດສຸກເສີນ ແມ່ນປະຈໍາຢູ່ບ່ອນນີ້ຖ້າທ່ານຮູ້ສຶກບໍ່ຄ່ອຍດີ.

ຫຼັງຈາກ 15 ນາທີ ຜ່ານໄປ, ແມ່ນທ່ານສໍາເລັດທຸກຂັ້ນຕອນ!

ຂໍຂອບໃຈ ສໍາລັບການເຂົ້າມາຮັບຢາວັກຊີນ.

ຖ້າທ່ານມີຄໍາຖາມກ່ຽວກັບຢາວັກຊີນໂຄວິດ-19, ເວົ້າກັບຜູ້ໃຫ້ບໍລິການປິ່ນປົວຂອງທ່ານ ຫຼື ເຂົ້າເບິ່ງທີ່ເວັບໄຊທ໌ຂອງພວກເຮົາ. [https://www.health.state.mn.us/diseases/coronavirus/vaccine/index.html](https://www.health.state.mn.us/diseases/coronavirus/vaccine/index.html)

Minnesota Department of Health
Communications Office
PO Box 64975
Paul, MN 55164-0975
651-201-4989

health.communications@state.mn.us
www.health.state.mn.us

6/17/21 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ,  ໂທຫາ:  651-201-4989*